**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ສປປລາວ

ເລກທີ 715 /ຫຄຊກລ.ຄພ

ນະຄອນຫລວງວຽງຈັນ, ວັນທີ 29 ສິງຫາ 2023.

# ບົດລາຍງານ

ຮຽນ: ທ່ານ ຫົວໜ້າຫ້ອງການ ຄຊກລ

ເລື່ອງ: ຜົນການຕິດຕາມ ກວດກາ ແລະ ຄວບຄຸມຄຸນນະພາບ ອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (HI) ທີ່ເມືອງຫົວເມືອງ ແຂວງ ຜົ້ງສາລີ.

## i. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການ ຄຊກລ ເລກທີ 604/ຫຄຊກລ, ລົງວັນທີ 28 ກໍລະກົດ 2023, ອະນຸມັດໃຫ້ປະຕິບັດຕິດຕາມ ກວດກາ ອົງການເພື່ອມະນຸດສະທຳ ແລະ ມີສ່ວນຮ່ວມ ວຽກງານສຳຫຼວດ, ກວດກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ, ລະຫວ່າງວັນທີ 31 ກໍລະກົດ ຫາ 09 ສິງຫາ 2023 ເຊິ່ງອົງການໄດ້ປະຕິບັດຕາມ ບົດບັນທຶກຄວາມເຂົ້າໃຈ ທີ່ເຊັນຮ່ວມກັບລັດຖະບານ ສປປ ລາວ. ການເຄື່ອນໄຫວຕິດຕາມ ກວດກາຄັ້ງນີ້ປະກອບມີ ຄະນະທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ, ຄຄກລ ເມືອງ ຂວາ, ໃໝ່ ແລະ ພະນັກງານວິຊາການ ອົງການ Hi ເຂົ້າຮ່ວມ. ທີມງານຄະນະກວດກາມີຊື່ລະອຽດດັ່ງລຸ່ມນີ້:

## ii. ຄະນະທີມງານກວດກາ

1. ທ່ານ ບຸນນານ ລັດຕະນະວົງ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
2. ທ່ານ ໄລທອງ ຈັນທາທິລາດ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
3. ທ່ານ ວິໄລສັກ ໄຊປັນຍາ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
4. ທ່ານ ໄວລຸ້ນ ແກ້ວປະເສີດ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
5. ທ່ານ ແພງສີ ດວງພັນໄຊ, ແພດ/ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
6. ທ່ານ ນ. ຈັນເພງ ມະນີສຸກ, ຄຄກລ ເມືອງ ຂວາ, ຫົວໜ້າ ຮສສ ເມືອງ ຂວາ;
7. ທ່ານ ຕຸດ ດວງວິໄລ, ຄຄກລ ເມືອງໃໝ່, ຮອງຫົວໜ້າ ຮສສ ເມືອງໃໝ່.

ພາກສ່ວນອົງການ Hi.

1. ທ່ານ ອີວົງ ເລີເຊີວັງຕົງ, ຫົວໜ້າຝ່າຍປະຕິບັດງານ ສຳຫລວດ ກວດກູ້ ແລະທາລາຍລະເບີດຂອງອົງການ Hi;
2. ທ່ານ ຈັນສະໝຸກ ອິນສີຊຽງໃໝ່ ຫົວໜ້າທີມ EOD Level 3 ຂອງອົງການ Hi;
3. ທ່ານ ນ ຫລ້າທິບ ຄຸນລະວັນ, ແພດ ປະຈຳອົງການ Hi.

## iii. ຈຸດປະສົງ

ຕິດຕາມ ແລະ ກວດກາ ການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ລະເບີດ ຂອງນັກວິຊາການ ການບໍລິຫານຄຸ້ມຄອງບັນຊາ ແລະ ສັງເກດທາງດ້ານເຕັກນິກການປະຕິບັດງານເກັບກູ້ລະເບີດ, ທຳລາຍລະເບີດ

ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ຊຸກຍູ້ ປັບປຸງການປະຕິບັດງານ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບ ເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

1) **ການເຄື່ອນໄຫວຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ**

ບົດບັນທຶກຄວາມເຂົ້າໃຈເຊັນຮ່ວມລະຫວ່າງລັດຖະບານ ແລະ ອົງການເກັບກູ້ລະເບີດເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ເລີ່ມແຕ່ມື້ອະນຸມັດ 29 ກໍລະກົດ 2021 ຫາ 31 ສິງຫາ 2023 ເຊິ່ງມີກິດຈະກຳ NTS, TS, AC, Roving, VA, MRE ແລະ ກິດຈະກຳສ້າງຄວາມອາດສາມາດໃຫ້ພະນັກງານທ້ອງຖິ່ນ. ນຳໃຊ້ທຶນຂອງກະຊວງການຕ່າງປະເທດ, ປະເທດໂຮນລັງ.

ຂໍ້ມູນການສຳຫຼວດດ້ານວິຊາການເດືອນ 01,02,03 ຂອງ ປີ 2023

| ປີ | ຈ/ນ ບ້ານ | ຜູ້ໄດ້ຮັບຜົນປະໂຫຍດ(ຄົນ) | ເນື້ອທີ່ສຳຫຼວດດ້ານວິຊາການ m$^2$ | ເນື້ອທີ່ ທີ່ມີຫຼັກຖານ CHA(m$^2$) | ບົມບີ | ສຳພາອຸດອື່ນໆ | ລວມ ລບຕ |
|---|---|---|---|---|---|---|---|
| 2022 | 0 | 0 | 0 | 0 | 0 | 0 | 0 |
| 2023 | 05 | 267 | 970,000 | 526,250 | 150 | 04 | 154 |

2) **ພະນັກງານຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະການມີສ່ວນຮ່ວມ ທີ່ເມືອງຂວາ**

ລົງຢ້ຽມຢາມຄັ້ງນີ້, ປະກອບມີພະນັກງານປະຈຳຢູ່ເມືອງ ຂວາ ທັງໝົດມີຈຳນວນ 21 ຄົນ, ຍິງ 12 ຄົນ. ຊຽວຊານຕ່າງປະເທດ 01 ຄົນ. ເຊິ່ງປະກອບມີ ໜ່ວຍງານບໍລິຫານ 01 ຄົນ, ໜ່ວຍງານເກັບກູ້ລະເບີດ 15 ຄົນ, ພະນັກງານ ຂັບລົດ 02 ຄົນ, ໜ່ວຍງານຂໍ້ມູນຂ່າວສານ ຊຸມຊົນ 01 ຄົນ ຍິງ, ວິຊາການຂັ້ນ 01 ມີ 08 ຄົນ, ຍິງ 07 ຄົນ, ວິຊາການຂັ້ນ 2 ມີຍິງ 01 ຄົນ, ວິຊາການຂັ້ນ 3 ມີ 02 ຄົນ, ຍິງ 01 ຄົນ, ແພດຍິງ 02 ຄົນ, ສຳຫຼວດບໍ່ແມ່ນວິຊາການໂດຍແມ່ນຫົວໜ້າທີມງານເປັນຜູ້ປະຕິບັດ, ໃນນີ້ປະກອບມີ ທີມງານສຳຫຼວດດ້ານວິຊາການ, ທີມງານຂໍ້ມູນຂ່າວສານຊຸມຊົນ, ທີມງານກວດກູ້ ແລະ ທີມງານທຳລາຍລະເບີດເຄື່ອນທີ່, ນອກນີ້ ຜ່ານມາແມ່ນໜ່ວຍງານຂໍ້ມູນທີ່ເຮັດໜ້າທີ່ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ແລະ ພ້ອມທັງເຮັດວຽກສຳຫຼວດບໍ່ແມ່ນວິຊາການ ໄດ້ລົງມາເຄື່ອນໄຫວແລ້ວ. ພະນັກງານທັງໝົດທີ່ປະຕິບັດໃນເມືອງຂວາ ແລະ ເມືອງໃໝ່ ຂອງອົງການແມ່ນໄດ້ຮັບການຝຶກອົບຮົມ ໂດຍອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ.

3) **ຕິດຕາມສະໜາມສຳຫຼວດດ້ານວິຊາການ, ກວດກູ້ ແລະ ຄວບຄຸມຄຸນນະພາບ.**

– **ການເກັບກູ້ລະເບີດບໍ່ທັນແຕກ**

ຢ້ຽມຢາມສະໜາມກວດກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ບ້ານ ທ່າບັກ **ID: 705003 CL, AC, 207.** ເນື້ອທີ່ກະສິກຳ (ສວນ) ເລີ້ມວັນທີ 16 **ກໍລະກົດ** 2023, ຄາດຄະເນຈະສຳເລັດ 30 **ກັນຍາ** 2023, ທີມງານມີຈຳນວນຄົນ 12 ຄົນ, ວິຊາການເກັບກູ້ 07 ຄົນ, ເຊິ່ງມີເນື້ອທີ່ຈຳນວນ 72,500 m$^2$ ເນື້ອທີ່ກວດກູ້ໄດ້ 14625 m$^2$, ຜູ້ໄດ້ຮັບຜົນປະໂຫຍດ 10 ຄອບຄົວ, 53 ຄົນ, ຍິງ 28 ຄົນ, ສະໜາມນີ້ພົບລະເບີດບົມບີ 26 ຈຳນວນ 12 ໜ່ວຍ ລູກປືນ 20 ມມ ຈຳນວນ 04 ລູກ, ການປະຕິບັດກວດກູ້ລະເບີດສະເລ່ຍຈຳນວນເນື້ອທີ່ 150 ຕາແມັດ ຕໍ່ຄົນ ຕໍ່ມື້, ເຕັກນິກການກວດກູ້ແມ່ນນຳໃຊ້ 01 ຄົນ ທັງກວດທັງຈົ່ມ ແລະ ນອກນີ້ມີການສະໜັບໜູນດ້ານການບໍລິຫານດັ່ງນີ້:

ການສະໜັບສະໜູນດ້ານການແພດ, ການບັນຊາສະໜາມ, ລະບົບການສື່ສານການ, ປັກໝາຍສະໜາມເກັບກູ້, ເອກະສານປະຈຳສະໜາມ, ພະຫະນະນຳສົ່ງຄົນເຈັບ ແລະ ອຸປະກອນການແພດ. ການເກັບກູ້ລະເບີດໄດ້ປະຕິບັດຕາມລະບຽບ ແລະ ຂັ້ນຕອນການກວດກູ້ (ໄດ້ມີການທົດສອບເຄື່ອງກວດກັບລະເບີດເປົ້າໝາຍໃນຄວາມເລິກ 25 ຊັງຕີແມັດ), ການໝາຍ ລບຕ ທີ່ກວດພົບ, ສະໜາມນີ້ນຳໃຊ້ເຄື່ອງກວດຫຍໍ້ທໍ້ MineLab F3s ແລະ L. ການຄວບຄຸມຄຸນນະພາບພາຍໃນຫົວໜ້າທີມງານ 15% EOD3, 20% EOD2 ຄືວິທີ ພາຍຫຼັງວິຊາການເກັບກູ້ກວດສຳເລັດ 05 ເລນ ຂອງບັອກນັ້ນ ຫົວໜ້າທີມຈຶ່ງກວດຄືນ (QC) ແລະ ວິຊາການຂັ້ນ 4 ຈະກວດ 2% ຂອງຫົວໜ້າທີມງານສຳເລັດ 01 ສະໜາມນີ້.

ອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ເຮັດວຽກຕິດຕໍ່ກັນ 9 ວັນ, ພັກ 2 ວັນ ຄື ວັນເສົາ ແລະ ວັນອາທິດ ແລະ ເຮັດວຽກຕໍ່ເນື່ອງກັນ 80 ຫຼື 81 ວັນ ຂຶ້ນກັບຈຳນວນວັນເຮັດວຽກຕົວຈິງພາຍໃນເດືອນ ແລະ ພັກວຽກ 30 ວັນ. ( (Hi) ບົດລາຍງານຄັດຕິດ, ກໍລະກົດ 2022 ຫາ ເດືອນ 30 ກໍລະກົດ 2023)

- **ຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ**

ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ (QC) ທັງໝົດ 01 ສະໜາມມີເນື້ອທີ່ຈຳນວນ 122, 188 m² ແລະ ເນື້ອທີ່ QC 2% ທັງໝົດຈຳນວນ 12,809 m² ເທົ່າກັບ 400 %, ເຮັດຕົວຈິງໄດ້ 3,06% ລື່ນຄາດໝາຍ. ເຊິ່ງມີລາຍລະອຽດສະໜາມ QC ດັ່ງລຸ່ມນີ້:

1. ບ້ານ ສົບຣຸ່ນ, HI-AC-2023-2023-0202003-198 S= 12,809 m² , QC% = 400 m² ( 20m x 20m ) 1 Boxs

- ກວດກາຕົວຈິງເຫັນວ່າ ບໍ່ພົບລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ຊິ້ນສ່ວນຂອງລະເບີດ (ສະເກັດ) ຫຼື ເຫຼັກເສດທີ່ໃຫຍ່ກວ່າເຄິ່ງບົມບີ 26 (BLU 26$^{1/2}$).

**ໝາຍເຫດ:** ຈຳນວນ 02 ສະໜາມ ຍັງບໍ່ມາມາດກວດກູ້ (ຄວບຄຸມຄຸນະພາບ) ເນື່ອງຈາກ ປະຊາຊົນທຳການຜະລິດ(ກຳລັງເຮັດນາ)

## iv. ສະຫຼຸບຜົນຂອງການກວດກາ

ຜ່ານການຕິດຕາມ ກວດກາສະໜາມກວດກູ້, ຄວບຄຸມຄຸນນະພາບ ທີ່ກຳລັງປະຕິບັດງານຂອງອົງການເກັບກູ້ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ປະຈຳເມືອງ ຂວາ ແລະ ເມືອງ ໃໝ່ ແຂວງ ຜົ້ງສາລີ ບັນດາທີມງານປະຕິບັດຕາມມາດຕະຖານການປະຕິບັດງານ (SOPs) ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ, ສະຫຼຸບໄດ້ດັ່ງນີ້:

1. **ຈຸດດີ**

- ບັນດາເອກະສານປະຈຳສະໜາມ ບົດບັນທຶກການທົດສອບເຄື່ອງກວດປະຈຳວັນ, ບັນທຶກໝວດເລືອດ, ອຸປະກອນການແພດ, ອາການແພ້ຕ່າງໆຂອງພະນັກງານ, ບັນທຶກຕິດຕາມ ກວດກາຂອງ SEOD, ບົດບັນທຶກແຂກເຂົ້າຢ້ຽມຢາມ ແລະ ອື່ນໆ.
- ລະບົບການສື່ສານຮັບໃຊ້ໄດ້ເປັນປົກກະຕິ ລະບົບສັນຍານຄື້ນສັ້ນ ແລະ ໂທລະສັບມືຖື.
- ຖ້າກວດພົບລະເບີດບົມບີ ທີມງານຈະຕ້ອງໄດ້ທຳລາຍໃນທ້າຍຊົ່ວໂມງເຮັດວຽກຂອງມື້ນັ້ນ ທຸກໆຄັ້ງ.
- ພະຫະນະຮັບໃຊ້ທີມງານພາກສະໜາມພຽງພໍ.
- ມີເອກະສານຄວບຄຸມຄຸນນະພາບພາຍໃນ (QC) ຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ.

– ກວດກາ ຄວບຄຸມຄຸນນະພາບ ຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມປະຈຳເມືອງໃໝ່ ແລະເມືອງຂວາແຂວງ ແຂວງຜົ້ງສາລີ ປະຕິບັດດັ່ງນີ້ ຫົວໜ້າ ທີມງານປະຕິບັດ 15% ແລະ ຜູ້ຊ່ວຍທີມ 20% ໃນລັອກທີ່ສຳເລັດແລ້ວ ເພື່ອໃຫ້ປອດລະເບີດບໍ່ທັນແຕກ.

– ລົງຄວບຄຸມຄຸນນະພາບ ສະໜາມທີ່ກວດກູ້ສຳເລັດແລ້ວ ມີ 01 ສະໜາມ ໃນຂ້າງເທິງສະໜາມດັ່ງກ່າວເຫັນວ່າມີຄວາມປອດໄພ ບໍ່ພົບຊິ້ນສ່ວນສະເກັດທີ່ໃຫຍ່ກ່ວາມາດຕະຖານແຫ່ງຊາດກຳນົດໄວ້ເຄິ່ງໜຶ່ງຂອງບົມບີ 26 (1/2 BLU 26).

## 2. ຂໍ້ຄົງຄ້າງ

1. ຫົວໜ້າທີມງານກວດກູ້ ເຮັດບໍ່ໄດ້ດີເທົ່າທີ່ຄວນກ່ຽວກັບການລາຍງານສະພາບສະໜາມຂອງການເຄື່ອນໄຫວວຽກຂອງຕົນຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ (ການນຳສະເໜີບໍ່ໄປຕາມຂັ້ນຕອນ, ບໍ່ຊັດເຈນ ແລະ ການລາຍງານຍັງທັນຄ່ອງແຂ້ວປານໃດກັບສະພາບໂຕຈິງ) ແນະນຳໃຫ້ຫົວໜ້າທີມປັບປຸງ ແລະ ທອດຖອນບົດຮຽນນຳໝູ່ເພື່ອນ.
2. ການບັນທຶກຂອງຫົວໜ້າທີມກວດກູ້ລະເບີດ ສື່ສານຂອງທີມງານກັບໂຮງໝໍ ໃນລະຫວ່າງເຄື່ອນຍ້າຍຄົນເຈັບຍັງບໍ່ຕໍ່ເນື່ອງ ກັບສະພາບຄວາມເປັນຈິງໃນການເຄື່ອນຍ້າຍ ແລະ ນຳສົ່ງຄົນເຈັບຈາກສະໜາມໄປຫາໂຮງໝໍ.
3. ການປະຕິບັດງານທາງດ້ານການແພດປະຈຳສະໜາມກວດກູ້ ກ່ຽວກັບການຫ້າມເລືອດ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນແນະນຳໃຫ້ປັບປຸງແລະທອດຖອນບົດຮຽນນຳໝູ່ເພື່ອນຜູ້ທີມີປະສົບການຫລາຍ.
4. ສະເໜີມາຍັງອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ໃຫ້ລົງມາຕິດຕາມກວດກາຊຸກຍູ້ ແນະນາທາງທີມງານແຕ່ລະເດືອນໃຫ້ຫລາຍຄັ້ງກວ່າເກົ່າ.
5. ສະເໜີໃຫ້ຈັດກອງປະຊຸມ ສະຫຼຸບເປັນໄລຍະ 03 ເດືອນ ແລະ 06 ດືອນ ຕາມກຳນົດໃນ ບົດບັນທຶກຄວາມເຂົ້າໃຈທີ່ເຊັນຮ່ວມລັດຖະບານ.

ຫົວໜ້າຫ້ອງການ ຄຊກລ

ບຸນເພັງ ສີສະຫວັດ

ໜ່ວຍງານຄຸ້ມຄອງຄຸນນະພາບ

**<u>ບ່ອນນຳສົ່ງ:</u>**

- ຄຄກລ ເມືອງຂວາ, ໃໝ່ ແລະ ແຂວງຜົ້ງສາລີ “ເພື່ອລາຍງານ”
- ອົງການເກັບກູ້ລະເບີດ HI ນະຄອນຫຼວງວຽງຈັນ ແລະ HI ປະຈຳ ເມືອງຂວາ, ໃໝ່ ແຂວງ ຜົ້ງສາລີ “ເພື່ອປະຕິບັດ”
- ຫ້ອງການ ຄຊກລ ເກັບມ້ຽນ